**ຕອບສາຍດ່ວນ 1518 ກະຊວງໂຍທາທິການ ແລະ ຂົນສົ່ງ 07 ກຸມພາ 2018**

ໃນໄລຍະຜ່ານມາມີປະຊາຊົນໄດ້ສົ່ງຂ່າວຫາຂະແໜງ ຍທຂ ຜ່ານທາງສາຍດ່ວນ 1518 ກະຊວງໂຍທາທິການ ແລະ ຂົນສົ່ງ, ໃນນັ້ນມີ 02 ບັນຫາ, ເຊິ່ງຕິດພັນກັບ ຍທຂ ແຂວງວຽງຈັນ ດັ່ງນີ້:

- ບັນຫາທີ່1: ປະຊາຊົນເຂດ ບ້ານໂພນໝີ, ແຂວງວຽງຈັນ ຖາມເລື່ອງຄວາມຄືບໜ້າການກໍ່ສ້າງທາງແຕ່ ແຍກໂພນໝີ-ທ່າລາດ ເພາະເຫັນວ່າການກໍ່ສ້າງໃຊ້ເວລາຫລາຍປີແຕ່ບໍ່ແລ້ວຈັກເທື່ອ, ປະຊາຊົນໄປມາລຳບາກ.
- ບັນຫາທີ່2: ປະຊາຊົນບ້ານນ້ອຍ, ເມືອງໂພນໂຮງ, ແຂວງວຽງຈັນ, ຂໍແຈ້ງມາເຖິງຂະແໜງໂຍທາ ໂດຍສະເພາະແມ່ນພາກສ່ວນທີ່ຮັບຜິດຊອບເສັ້ນທາງບ້ານນາໂພ-ປາກແຈ້ງ, ເຫັນວ່າບໍລິສັດດາລາວັນກໍ່ສ້າງໄດ້ເລີ່ມລົງມືກໍ່ສ້າງ ແຕ່ປີ 2013 ຕາມແຜນແມ່ນຈະແລ້ວປີ2015, ແຕ່ມາຮອດປະຈຸບັນກໍ່ຍັງບໍ່ແລ້ວ, ເສັ້ນທາງກໍ່ມີແຕ່ຂຸມ, ຂີ້ຝຸ່ນ ແລະ ຍັງມີລົດບັນທຸກຂົນຫີນ-ຊາຍ ເພື່ອໄປກໍ່ສ້າງທາງລົດໄຟກໍ່ໃຊ້ເສັ້ນທາງນີ້ຕະຫລອດ, ເຮັດໃຫ້ປະຊາຊົນທີ່ນຳໃຊ້ເສັ້ນທາງ ແລະ ປະຊາຊົນຜູ້ທີ່ອາໃສຢູ່ເຂດນັ້ນພົບຄວາມຫຍຸ້ງຍາກມາຫລາຍປີ.

ຕໍ່ກັບບັນຫາດັ່ງກ່າວທີມງານສາຍດ່ວນ 1518 ກະຊວງ ຍທຂ, ໄດ້ປະສານຫາພາກສ່ວນກ່ຽວຂ້ອງໂດຍສະເພາະແມ່ນພະແນກ ຍທຂ ແຂວງວຽງຈັນ ໃຫ້ຮູ້ວ່າ:

1. ຕໍ່ກັບບັນຫາທີ່1: ການກໍ່ສ້າງເສັ້ນທາງໂພນໝີ-ທ່າລາດ ບໍ່ສຳເລັດຕາມແຜນ ແມ່ນຍ້ອນຜູ້ຮັບເໝົາຂາດທຶນໝູນວຽນ, ການນຳແຂວງວຽງຈັນ ຈຶ່ງໄດ້ສັ່ງໂຈະການກໍ່ສ້າງເປັນການ ຊົ່ວຄາວ, ພ້ອມທັງ ໄດ້ສັ່ງໃຫ້ພະແນກ ຍທຂ ແຂວງວຽງຈັນ ກວດກາຄືນ ບໍລິມາດວຽກທີ່ໄດ້ປະຕິບັດແລ້ວ ແລະ ບໍລິມາດວຽກທີ່ຈະຕ້ອງໄດ້ສືບຕໍ່ປະຕິບັດໃນຕໍ່ໜ້າ, ພ້ອມທັງໃຫ້ຄົ້ນຄວ້າປັບປຸງແປງ ທາງດ້ານເຕັກນິກບາງອັນ ເພື່ອໃຫ້ສອດຄ່ອງກັບງົບປະມານທີ່ສາມາດຈັດຕັ້ງປະຕິບັດໄດ້, ຄົ້ນຄ້ວາວິທີ ແລະ ຮູບແບບການຊຳລະ ແລ້ວນຳສະເໜີຂໍທິດ ຊີ້ນຳຈາກຂັ້ນເທິງ ເພື່ອການຈັດຕັ້ງປະຕິບັດໃນຕໍ່ໜ້າ.
2. ຕໍ່ກັບບັນຫາທີ່2: ໂຄງການກໍ່ສ້າງເສັ້ນທາງນາໂພ-ປາກແຈ້ງ ແມ່ນໂຄງການລົງທຶນກ່ອນ, ແຕ່ເນື່ອງຈາກບໍລິສັດຂາດທຶນໝູນວຽນ ຈຶ່ງເຮັດໃຫ້ໂຄງການບໍ່ສຳເລັດຕາມແຜນ, ດັ່ງນັ້ນອຳນາດການປົກຄອງແຂວງວຽງຈັນ ຈຶ່ງສັ່ງໂຈະການກໍ່ສ້າງ ແລະ ພະແນກ ຍທຂ ແຂວງວຽງຈັນ ກໍ່ໄດ້ແກ້ໄຂ ເພື່ອໃຫ້ສາມາດສັນຈອນໄປມາເປັນການຊົ່ວຄາວ ແລະ ພ້ອມນີ້ກໍ່ໄດ້ລາຍງານ ເພື່ອຂໍທິດຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ, ເພື່ອຮັບປະກັນໃຫ້ປະຊາຊົນໄດ້ຮັບຄວາມສະດວກສະບາຍກວ່າປະຈຸບັນ.

ເບິ່ງລວມແລ້ວທັງ 2 ໂຄງການລ້ວນແລ້ວແຕ່ຂາດສະພາບຄ່ອງທາງດ້ານການເງິນຂອງຜູ້ຮັບເໝົາ ຈຶ່ງເຮັດໃຫ້ປະຊາຊົນໄດ້ຮັບຜົນກະທົບ, ຫວັງຢ່າງຍິ່ງວ່າອຳນາດການປົກຄອງກໍ່ຄື ພະແນກ ຍທຂ ແຂວງວຽງຈັນ ຈະສຸມໃສ່ແກ້ໄຂບັນຫາດັ່ງກ່າວນີ້ໂດຍໄວ ເພື່ອອຳນວຍຄວາມສະດວກໃຫ້ແກ່ພໍ່ແມ່ປະຊາຊົນໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນເທື່ອລະກ້າວ.